**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງກະສິກຳ ແລະ ປ່າໄມ້ ເລກທີ: 1622 /ກປ

ນະຄອນຫຼວງວຽງຈັນ, ວັນທີ 07 MAR 2023

# ແຈ້ງການ

**ເຖິງ: ຫ້ອງການ, ບັນດາກົມ, ສະຖາບັນ, ສູນ, ກອງທຶນ, ວິທະຍາໄລກະສິກຳ ແລະ ປ່າໄມ້ ແລະ ໂຮງຮຽນຊົນລະປະທານຊັ້ນສູງ ທ່າງ່ອນ.**

**ເລື່ອງ: ສືບຕໍ່ເປີດຂະບວນການແຂ່ງຂັນຮັກຊາດ ແລະ ພັດທະນາ ຂອງ ຫ້ອງການ, ບັນດາກົມ, ສະຖາບັນ, ສູນ, ກອງທຶນ, ວິທະຍາໄລກະສິກຳ ແລະ ປ່າໄມ້ ແລະ ໂຮງຮຽນຊົນລະປະທານຊັ້ນສູງ ທ່າງ່ອນ ອ້ອມຂ້າງກະຊວງກະສິກຳ ແລະ ປ່າໄມ້.**

- ອີງຕາມ ດຳລັດ ຂອງລັດຖະບານ ວ່າດ້ວຍການແຂ່ງຂັນ-ຍ້ອງຍໍ ສະບັບເລກທີ 116/ລບ, ລົງວັນທີ 22 ເມສາ 2019;
- ອີງຕາມ ດຳລັດ ຂອງນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງກະສິກຳ ແລະ ປ່າໄມ້ ສະບັບເລກທີ 603/ນຍ, ລົງວັນທີ 15 ຕຸລາ 2021;
- ອີງຕາມ ຂໍ້ຕົກລົງ ຂອງຄະນະຊີ້ນຳລະດັບຊາດ ກ່ຽວກັບ ການແຂ່ງຂັນ-ຍ້ອງຍໍ ຮັກຊາດ ແລະ ພັດທະນາ ວ່າດ້ວຍການແຕ່ງຕັ້ງຄະນະຊີ້ນຳການແຂ່ງຂັນ-ຍ້ອງຍໍ ຮັກຊາດ ແລະ ພັດທະນາ ກະຊວງກະສິກຳ ແລະ ປ່າໄມ້ ສະບັບເລກທີ 21/ຄຊຂຍ, ລົງວັນທີ 08 ກັນຍາ 2022 ແລະ ແຈ້ງການ ສະບັບເລກທີ 01/ຄຊຂຍ, ລົງວັນທີ 31 ຕຸລາ 2022;
- ອີງຕາມ ການຄົ້ນຄວ້າ ແລະ ນຳສະເໜີຂອງກົມຈັດຕັ້ງ ແລະ ພະນັກງານ ສະບັບເລກທີ 0362/ກຈພ, ລົງວັນທີ 22 ກຸມພາ 2023.

ເພື່ອສືບຕໍ່ປະຕິບັດສອງໜ້າທີ່ຍຸດທະສາດ ຄື: ປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ ໂດຍສະເພາະການຜັນຂະຫຍາຍມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກ, ມະຕິກອງປະຊຸມໃຫຍ່ ຄັ້ງທີ VI ຂອງອົງຄະນະພັກກະຊວງກະສິກຳ ແລະ ປ່າໄມ້, ແຜນພັດທະນາເສດຖະກິດ-ສັງຄົມ ຄັ້ງທີ XI ແລະ ແຜນພັດທະນາກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ 5 ປີ ຄັ້ງທີ IX (2021-2025); ສືບຕໍ່ຈັດຕັ້ງ ແລະ ການຜັນຂະຫຍາຍເນື້ອໃນຂໍ້ແຂ່ງຂັນ ຮັກຊາດ ແລະ ພັດທະນາ ຂອງກະຊວງກະສິກຳ ແລະ ປ່າໄມ້ ທີ່ໄດ້ຮັບຮອງໃນກອງປະຊຸມສະຫຼຸບຂະບວນການແຂ່ງຂັນ, ຍ້ອງຍໍ ຜົນງານ 05 ປີ (2016-2020) ແລະ ເປີດຂະບວນການແຂ່ງຂັນ-ຍ້ອງຍໍ ພາຍໃຕ້ຄຳຂວັນ "ຮັກຊາດ ແລະ ພັດທະນາ" ຮອດປີ 2025 ໃນຄັ້ງວັນທີ 10 ກຸມພາ 2023 ແລະ ເພື່ອເຮັດໃຫ້ວຽກງານແຂ່ງຂັນ-ຍ້ອງຍໍ ເຂົ້າສູ່ທຸກຂົງເຂດວຽກງານຢ່າງຕັ້ງໜ້າ ແລະ ໄດ້ຮັບການຈັດຕັ້ງປະຕິບັດຢ່າງມີປະສິດທິຜົນ, ທັງເປັນການກະຕຸກຊຸກຍູ້, ປຸກລະດົມ ພະນັກງານ-ລັດຖະ ກອນ ທົ່ວກະຊວງກະສິກຳ ແລະ ປ່າໄມ້ ເຂົ້າຮ່ວມຢ່າງແຂງແຮງ ແລະ ກວ້າງຂວາງ ພ້ອມທັງແຂ່ງຂັນ

ກັນສ້າງຂະບວນການພັດທະນາວຽກງານກະສິກຳ ແລະ ປ່າໄມ້ ໃຫ້ເປັນຂະບວນຟົດຟື້ນ, ຕໍ່ເນື່ອງ ແລະ ມີປະສິດທິຜົນ; ທັງໃຫ້ເປັນຄວາມຮັບຜິດຊອບໂດຍກົງຂອງຄະນະພັກ, ຄະນະນຳແຕ່ລະຂັ້ນ ແລະ ກາຍເປັນໜ້າທີ່ຂອງພະນັກງານ-ລັດຖະກອນ ກໍຄືປວງຊົນລາວທັງຊາດ ແນ່ໃສ່ນຳພາປະເທດຊາດຫຼຸດພົ້ນອອກຈາກສະຖານະດ້ອຍພັດທະນາ ໃນປີ 2026. ບົນຈິດໃຈບູລະນະລະບອບປະຊາທິປະໄຕປະຊາຊົນ ໃຫ້ສົມບູນຍິ່ງຂຶ້ນ, ສ້າງການຫັນປ່ຽນຢ່າງແຂງແຮງ, ເລິກເຊິ່ງ ແລະ ຮອບດ້ານ. ສະນັ້ນ, ລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ ຈຶ່ງອອກແຈ້ງການ ສືບຕໍ່ເປີດຂະບວນການແຂ່ງຂັນຮັກຊາດ ແລະ ພັດທະນາ ຂັ້ນກະຊວງ ດັ່ງນີ້:

1. ເພີ່ມທະວີຄວາມເອົາໃຈໃສ່ສືບຕໍ່ຄົ້ນຄວ້າ, ເຊື່ອມຊຶມ, ກຳແໜ້ນ ແລະ ຜັນຂະຫຍາຍ ມະຕິຕົກລົງ ຂອງກົມການເມືອງສູນກາງພັກ ວ່າດ້ວຍການເພີ່ມທະວີວຽກງານແຂ່ງຂັນ-ຍ້ອງຍໍໃນໄລຍະໃໝ່ ສະບັບເລກທີ 01/ກມສພ, ລົງວັນທີ 07 ມັງກອນ 2010 ພາຍໃຕ້ຄຳຂວັນ “ຮັກຊາດ ແລະ ພັດທະນາ”, ລັດຖະດຳລັດ ຂອງປະທານປະເທດ ວ່າດ້ວຍການເປີດຂະບວນການແຂ່ງຂັນ-ຍ້ອງຍໍ ທົ່ວປະເທດໃນໄລຍະໃໝ່ ສະບັບເລກທີ 011/ປປທ, ລົງວັນທີ 20 ມັງກອນ 2010, ດຳລັດ ຂອງລັດຖະບານ ວ່າດ້ວຍການແຂ່ງຂັນ-ຍ້ອງຍໍ ສະບັບເລກທີ 116/ລບ, ລົງວັນທີ 22 ເມສາ 2019 ແລະ ຄຳແນະນຳກະຊວງພາຍໃນ ກ່ຽວກັບ ການຈັດຕັ້ງຜັນຂະຫຍາຍ ດຳລັດວ່າດ້ວຍການແຂ່ງຂັນ ແລະ ຍ້ອງຍໍ ສະບັບເລກທີ 01/ພນ, ລົງວັນທີ 07 ກຸມພາ 2020 ໃຫ້ກວ້າງຂວາງ ແລະ ທົ່ວເຖິງ;
2. ໃຫ້ລົງເລິກຄົ້ນຄວ້າ ແລະ ຜັນຂະຫຍາຍ ຂໍ້ແຂ່ງຂັນ ຕາມຂໍ້ຕົກລົງ ຂອງລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ ວ່າດ້ວຍການເປີດຂະບວນການແຂ່ງຂັນ-ຍ້ອງຍໍ ພາຍໃຕ້ຄຳຂວັນ “ຮັກຊາດ ແລະ ພັດທະນາ” ແຕ່ປີ 2021-2025 ສະບັບເລກທີ 5079/ກປ, ລົງວັນທີ 24 ພະຈິກ 2022 ເຊິ່ງໄດ້ເປີດຂະບວນການແຂ່ງຂັນ ແລະ ຈັບມືແຂ່ງຂັນໃນວັນທີ 10 ກຸມພາ 2023 ຄື: 3 ຂະບວນການ ແລະ 4 ເປົ້າໝາຍ ໃຫ້ເລິກເຊິ່ງ, ກວ້າງຂວາງ ໂດຍມີການວາງແຜນ, ກຳນົດຈຸດປະສົງ, ຄາດໝາຍ, ເນື້ອໃນຢ່າງລະອຽດຈະແຈ້ງ; ການປະຕິບັດຄາດໝາຍທີ່ມະຕິກອງປະຊຸມໃຫຍ່ ຂັ້ນຂອງຕົນ; ແຜນພັດທະນາກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ 5 ປີ ຄັ້ງທີ IX (2021-2025) ວາງອອກ ເປັນເນື້ອໃນການແຂ່ງຂັນຂອງຕົນ ບົນພື້ນຖານການຫັນເປັນອັນລະອຽດ, ຈະແຈ້ງ, ເປັນອັນສະເພາະຂອງແຕ່ລະກົມກອງ ແລະ ໃຫ້ສອດຄ່ອງກັບໜ້າທີ່ການການເມືອງທີ່ຕົນເອງຮັບຜິດຊອບໃຫ້ເປັນຮູບປະທຳຕົວຈິງ ເພື່ອສາມາດຕີລາຄາປະເມີນຜົນໄດ້ເປັນແຕ່ລະໄລຍະ;
3. ໃຫ້ສະຫຼຸບຕີລາຄາຂະບວນການແຂ່ງຂັນ ແລະ ຍ້ອງຍໍ ພ້ອມທັງຈັດກອງປະຊຸມຕີລາຄາຂະບວນການແຂ່ງຂັນຮັກຊາດ ແລະ ພັດທະນາ (2016-2020) ແລະ ຈັດພິທີມອບການຍ້ອງຍໍ ໃຫ້ພະນັກງານ-ລັດຖະກອນ ຂອງຕົນ (ໂດຍມອບໃຫ້ຫົວໜ້າຫ້ອງການ, ບັນດາກົມ, ສະຖາບັນ ແລະ ຫົວໜ່ວຍວິຊາການລະດັບ 2 ອ້ອມຂ້າງກະຊວງກະສິກຳ ແລະ ປ່າໄມ້ ເປັນຜູ້ມອບການຍ້ອງຍໍຜົນງານດັ່ງກ່າວ) ແລະ ໃຫ້ສືບຕໍ່ເປີດຂະບວນການແຂ່ງຂັນ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ ພ້ອມທັງລົງທະບຽນແຂ່ງຂັນ, ເປັນເຈົ້າການນຳພາສ້າງຂະບວນການແຂ່ງຂັນ ຮັກຊາດ ແລະ ພັດທະນາ ເວົ້າລວມ, ເວົ້າສະເພາະ ແມ່ນການຜັນຂະຫຍາຍ, ສຸມໃສ່ຊຸກຍູ້ການປະຕິບັດຄາດໝາຍທີ່ ກອງປະຊຸມໃຫຍ່ ຄັ້ງທີ VI ຂອງອົງຄະນະພັກກະຊວງກະສິກຳ ແລະ ປ່າໄມ້ ແລະ ແຜນພັດທະນາກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ 5 ປີ ຄັ້ງທີ IX (2021-2025) ວາງອອກ ໃຫ້ເປັນຮູບປະທຳຕົວຈິງ;

4. ພາຍຫຼັງເປີດຂະບວນແຂ່ງຂັນ ຄະນະຊີ້ນໍາການແຂ່ງຂັນ ແລະ ຍ້ອງຍໍ ຮັກຊາດ ແລະ ພັດທະນາ ຂອງແຕ່ລະກົມກອງແລ້ວ ຕ້ອງມີການປຸກລະດົມ, ຊີ້ນໍາຂະບວນການແຂ່ງຂັນເປັນແຕ່ລະໄລຍະ; ມີການຊຸກຍູ້, ຕິດຕາມກວດກາປະເມີນຜົນການແຂ່ງຂັນ, ສະຫຼຸບ, ຕີລາຄາ, ຖອດຖອນບົດຮຽນ, ເລືອກເຟັ້ນຕົວແບບທີ່ກ້າວໜ້າ, ບຸກຄົນ ແລະ ກົມກອງທີ່ດີເດັ່ນ ເພື່ອຍ້ອງຍໍຜົນສໍາເລັດຂອງການແຂ່ງຂັນ; ຕ້ອງໄດ້ນໍາສົ່ງແຜນການແຂ່ງຂັນ ແລະ ລາຍງານໃຫ້ຄະນະຊີ້ນໍາການແຂ່ງຂັນ-ຍ້ອງຍໍ ຮັກຊາດ ແລະ ພັດທະນາ ກະຊວງກະສິກໍາ ແລະ ປ່າໄມ້ ຮັບຊາບ ໂດຍຜ່ານກົມຈັດຕັ້ງ ແລະ ພະນັກງານ;
5. ຜ່ານການຈັດຕັ້ງປະຕິບັດໃນແຕ່ລະໄລຍະ, ແຕ່ລະບັ້ນ ແລະ ແຕ່ລະປີ ຕ້ອງມີການສະຫຼຸບ, ຕີລາຄາ, ຖອດຖອນບົດຮຽນ, ເລືອກວຽກດີ, ຄົນເດັ່ນເພື່ອຍ້ອງຍໍ, ການຈັດກອງປະຊຸມສະລຸບຕີລາຄາຂະບວນການແຂ່ງຂັນ ຮັກຊາດ ແລະ ພັດທະນາ ແມ່ນໃຫ້ເອົາເດືອນພະຈິກ ຂອງທຸກໆປີ ໂດຍມອບໃຫ້ ຫົວໜ້າຫ້ອງການ, ບັນດາກົມ ສະຖາບັນ, ສູນກອງທຶນ, ວິທະຍາໄລກະສິກໍາ ແລະ ປ່າໄມ້ ແລະ ໂຮງຮຽນຊົນລະປະທານຊັ້ນສູງ ທ່າງ່ອນ ເປັນປະທານ ແລະ ໃຫ້ລາຍງານໃຫ້ຄະນະຊີ້ນໍາການແຂ່ງຂັນ-ຍ້ອງຍໍ ຮັກຊາດ ແລະ ພັດທະນາ ກະຊວງກະສິກໍາ ແລະ ປ່າໄມ້ ຮັບຊາບ ບໍ່ໃຫ້ກາຍເດືອນທັນວາ ໂດຍຜ່ານກົມຈັດຕັ້ງ ແລະ ພະນັກງານ; ໃນການຈັດຕັ້ງປະຕິບັດຫາກພົບຄວາມຫຍຸ້ງຍາກປະການໃດ ສະເໜີໃຫ້ພາກສ່ວນຕ່າງໆ ລາຍງານເພື່ອຂໍທິດຊີ້ນໍາຈາກຂັ້ນເທິງໃຫ້ທັນກັບເວລາ.

ດັ່ງນັ້ນ, ຈຶ່ງແຈ້ງມາເພື່ອຊາບ ແລະ ພ້ອມກັນຈັດຕັ້ງປະຕິບັດເນື້ອໃນຂ້າງເທິງໃຫ້ໄດ້ຮັບຜົນດີ.

ລັດຖະມົນຕີ

ປອ. ເພັດ ພົມພິພັກ